**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ

# ຂໍ້ມູນ ແລະ ຂັ້ນຕອນສຳລັບການປະກອບເອກະສານ ເພື່ອຂໍຜະລິດ ຜະລິດຕະພັນເຄມີທີ່ນຳໃຊ້ໃນຄົວເຮືອນ

I. ຕ້ອງມີໂຮງງານ/ຫ້ອງຜະລິດທີ່ໄດ້ມາດຕະຖານຕັ້ງຢູ່ ສປປ ລາວ ທີ່ຖືກຕ້ອງຕາມກົດໝາຍ;

II. ຕ້ອງມີວິຊາການດ້ານການຜະລິດ ທີ່ຜ່ານການຝຶກອົບຮົມ ຫຼື ຈົບວິຊາສະເພາະດ້ານເຄມີ/ເພສັຊ ທີ່ມີປະສົບການ

- ການປະກອບເອກະສານເພື່ອຂໍໃບອະນຸຍາດດ້ານວິຊາການ:

| | | |
|---|---|---|
| 1. | ໜັງສືສະເໜີຂໍໃບອະນຸຍາດດ້ານວິຊາການ | 1 ສະບັບ |
| 2. | ຊີວະປະຫວັດຫຍໍ້ (4 ໜ້າ) | 1 ສະບັບ |
| 3. | ສຳເນົາໃບປະກາດສະນິຍະບັດ ຫຼື ໃບຢັ້ງຢືນການຝຶກອົບຮົມທີ່ກ່ຽວຂ້ອງ | 1 ສະບັບ |
| 4. | ໃບຢັ້ງຢືນທີ່ຢູ່ | 1 ສະບັບ |
| 5. | ໃບຢັ້ງຢືນສຸຂະພາບ | 1 ສະບັບ |
| 6. | ໃບແຈ້ງໂທດ | 1 ສະບັບ |
| 7. | ຮູບຖ່າຍຂະໜາດ 3x4 (ບໍ່ເກີນ 3 ເດືອນ) | 3 ໃບ |
| 8. | ແຜນວາດທີ່ຕັ້ງຂອງໂຮງງານ | 1 ສະບັບ |
| 9. | ລາຍການວັດຖຸເຄມີທີ່ຈະນຳໃຊ້/ຜະລິດ (Chemical List) | 1 ສະບັບ |
| 10. | ຂໍ້ມູນຄວາມປອດໄພຂອງລາຍການເຄມີທີ່ຈະນຳໃຊ້ ແລະ ຜະລິດ (Safety Data sheet) | 1 ສະບັບ |
| 11. | ວິທີ ແລະ ຂັ້ນຕອນການຜະລິດ | 1 ສະບັບ |
| 12. | ສຳເນົາໃບທະບຽນຕ່າງໆທີ່ກ່ຽວຂ້ອງ | 1 ສະບັບ |

ໝາຍເຫດ:
- ຄ່າທຳນຽມ 200,000 ກີບ/2ປີ;
- ບໍລິສັດ/ໂຮງງານ ຕ້ອງມາຕໍ່ໃບອະນຸຍາດດ້ານວິຊາການກ່ອນຈະໝົດອາຍຸ 3 ເດືອນ;
- ກໍລະນີມີການປ່ຽນແປງວິຊາການຄົນໃໝ່, ໂຮງງານຕ້ອງມາແຈ້ງກົມອາຫານ ແລະ ຢາ ແລະ ປະກອບເອກະສານຂໍໃບອະນຸຍາດດ້ານວິຊາການຄົນໃໝ່ ພາຍໃນ 3 ເດືອນ.

**III. ຂໍອະນຸຍາດຜະລິດທົດລອງ:**

| | | |
|---|---|---|
| 1. | ໜັງສືສະເໜີຂໍອະນຸຍາດຜະລິດທົດລອງ | 1 ສະບັບ |
| 2. | ແຜນວາດທີ່ຕັ້ງຂອງໂຮງງານ | 1 ສະບັບ |
| 3. | ສຳເນົາໃບອະນຸຍາດດ້ານວິຊາການ | 1 ສະບັບ |
| 4. | ສູດຕຳລາ (Formulation) | 1 ສະບັບ |
| 5. | ລາຍການວັດຖຸເຄມີທີ່ຈະນຳໃຊ້/ຜະລິດ (Chemical List) | 1 ສະບັບ |
| 6. | ຂໍ້ມູນຄວາມປອດໄພຂອງລາຍການເຄມີທີ່ຈະນຳໃຊ້ ແລະ ຜະລິດ (Safety Data sheet) | 1 ສະບັບ |
| 7. | ວິທີ ແລະ ຂັ້ນຕອນການຜະລິດ | 1 ສະບັບ |

8. ສຳເນົາໃບທະບຽນຕ່າງໆທີ່ກ່ຽວຂ້ອງ 1 ສະບັບ

ໝາຍເຫດ: - ໃບອະນຸຍາດຜະລິດທົດລອງ ແມ່ນອະນຸຍາດນຳໃຊ້ຜະລິດທົດລອງ ເພື່ອນຳເອົາເອົາຜະລິດຕະພັນໄປວິໄຈຄຸນນະພາບເທົ່ານັ້ນ;

- ໃບອະນຸຍາດຜະລິດທົດລອງມີອາຍຸນຳໃຊ້ 01 ປີ.

## IV. ວິໄຈຜະລິດຕະພັນ:

1. ໜັງສືສະເໜີຂໍໃບນຳສົ່ງວິໄຈ 1 ສະບັບ
2. ໃບອະນຸຍາດຜະລິດທົດລອງ 1 ສະບັບ
3. ສຳເນົາໃບທະບຽນຕ່າງໆທີ່ກ່ຽວຂ້ອງ 1 ສະບັບ

ໝາຍເຫດ: - ຄ່າໃຊ້ຈ່າຍໃນການວິໄຈ ແມ່ນບໍລິສັດ/ໂຮງງານເປັນຜູ້ຮັບຜິດຊອບ;

- ກໍລະນີຜົນວິໄຈບໍ່ຜ່ານເກນມາດຕະຖານ ແລະ ບໍລິສັດ/ໂຮງງານໄດ້ປັບສູດຜະລິດຕະພັນຄືນໃໝ່, ໂຮງງານຕ້ອງໄດ້ແຈ້ງສູດຕຳລາ, ລາຍການວັດຖຸເຄມີທີ່ຈະນຳໃຊ້/ຜະລິດ ແລະ ວິທີ ແລະ ຂັ້ນຕອນການຜະລິດຄືນໃໝ່ ໃນການປະກອບແບບຟອມໃນຄັ້ງຕໍ່ໄປ.

## V. ການຂໍຂຶ້ນທະບຽນຜະລິດຕະພັນເຄມີຄົວເຮືອນ:

<u>ພາກທີ 1: ຂໍ້ມູນກ່ຽວກັບບໍລິສັດ/ໂຮງງານ</u>:

1. ສຳເນົາໃບອະນຸຍາດດ້ານວິຊາການ 1 ສະບັບ
2. ແຜນວາດທີ່ຕັ້ງຂອງໂຮງງານ 1 ສະບັບ
3. ສຳເນົາໃບທະບຽນຕ່າງໆທີ່ກ່ຽວຂ້ອງ 1 ສະບັບ

<u>ພາກທີ 2: ຂໍ້ມູນກ່ຽວກັບຜະລິດຕະພັນ</u>:

1. ສູດຕຳລາ (Formulation) 1 ສະບັບ
2. ລາຍການວັດຖຸເຄມີທີ່ຈະນຳໃຊ້/ຜະລິດ (Chemical List) 1 ສະບັບ
3. ວິທີ ແລະ ຂັ້ນຕອນການຜະລິດ 1 ສະບັບ
4. ສຳເນົາໃບຢັ້ງຢືນການຈົດແຈ້ງ ຫຼື ຂຶ້ນທະບຽນຈາກປະເທດຜູ້ຜະລິດ* (ສຳລັບຜະລິດຕະພັນນຳເຂົ້າ) 1 ສະບັບ
5. ໃບຢັ້ງຢືນຜົນວິໄຈ (Certificate of Analysis) 1 ສະບັບ
6. ສະຫຼາກ ແລະ ເຄື່ອງຫຸ້ມຫໍ່ (Labeling and Packaging) 1 ສະບັບ
7. ເລກລະຫັດການຜະລິດ (Batch Coding System) 1 ສະບັບ
8. ຜະລິດຕະພັນຕົວຢ່າງ (Product Sample) 1 ຕົວຢ່າງ

* ສຳລັບບໍລິສັດນຳເຂົ້າ

ໝາຍເຫດ: - ຄ່າທຳນຽມ 200,000 ກີບ/ລາຍການ/2ປີ;

- ໃບຢັ້ງຢືນການຂຶ້ນທະບຽນດັ່ງກ່າວ ແມ່ນຢັ້ງຢືນໃຫ້ຕາມຜົນວິໄຈທີ່ຜ່ານເກນມາດຕະຖານຂອງຜະລິດຕະພັນທີ່ນຳໄປວິໄຈ ແລະ ຂໍ້ມູນຂອງຜະລິດຕະພັນທີ່ບໍລິສັດສະໜອງໃຫ້ເທົ່ານັ້ນ;
- ກໍລະນີໂຮງງານມີການປັບປຸງ/ປ່ຽນແປງ ແລະ ພັດທະນາສູດຕຳລາຂອງຜະລິດຕະພັນໃໝ່, ໂຮງງານຕ້ອງໄດ້ປະກອບເອກະສານເລີ່ມຈາກຂັ້ນຕອນທີ III ຄືນໃໝ່;

  - ກໍລະນີໂຮງງານມີການປັບປຸງ/ປ່ຽນແປງສະຫຼາກ ແລະ ເຄື່ອງຫຸ້ມຫໍ່ຂອງຜະລິດຕະພັນ, ໂຮງງານຕ້ອງແຈ້ງ ກົມອາຫານ ແລະ ຢາ ກ່ອນທີ່ຜະລິດຕະພັນຊຸດໃໝ່ຈະຖືກຜະລິດ ແລະ ວາງຂາຍ 3 ເດືອນ.

- ທ່ານສາມາດດາວໂຫຼດແບບຟອມຕ່າງໆໄດ້ທີ່ Website: www.fdd.gov.la → ແບບຟອມຄຳຮ້ອງ → ຢາເສບຕິດ, ເຄມີ ແລະ ເຄື່ອງສຳອາງ → ເຄມີອັນຕະລາຍທີ່ນຳໃຊ້ໃນຄົວເຮືອນ.;
- ສອບຖາມຂໍ້ມູນ (ພະແນກຄຸ້ມຄອງຢາເສບຕິດ, ເຄມີ ແລະ ເຄື່ອງສຳອາງ) : 021 255361 ແລະ 214001.